# ອົງການຄຸ້ມຄອງທີ່ຢູ່ອາໄສຂອງລັດຖະບານກາງ (FHA)
# ຂໍ້ມູນສຳຄັນກ່ຽວກັບການຟື້ນຟູຈາກໄພພິບັດ

**W W W . H U D . G O V / ຊອກຫາກ່ຽວກັບ "D I S A S T E R  R E L I E F  F O R  T H E  F H A  H O M E O W N E R"**
**("ກ າ ນ ບັ ນ ເ ທົ າ ທຸ ກ ໄ ພ ພິ ບັ ດ ສຳ ລັ ບ ເ ຈົ້ າ ຂ ອ ງ ເ ຮື ອ ນ ຂ ອ ງ  F H A")**

**ລົງທະບຽນນຳ FEMA**
ເມື່ອທ່ານປະທານະທິບໍດີປະກາດໄພພິບັດແລ້ວ, ອົງການຄຸ້ມຄອງເຫດສຸກເສີນຂອງລັດຖະບານກາງ (FEMA) ຈະສ້າງຕັ້ງສູນຟື້ນຟູໄພພິບັດຂຶ້ນໃນເຂດພື້ນທີ່ທີ່ໄດ້ຮັບຜົນກະທົບ. ການຊ່ວຍເຫຼືອອາດຈະມີໃຫ້ແກ່ທ່ານ ແລະ ຄອບຄົວຂອງທ່ານເມື່ອທ່ານໄດ້ລົງທະບຽນນຳອົງການ FEMA ແລ້ວ. ທ່ານສາມາດລົງທະບຽນໄດ້ດ້ວຍຕົນເອງຢູ່ສູນຟື້ນຟູໄພພິບັດ, ທາງອອນລາຍທີ່ **www.FEMA.gov** ຫຼື ທາງໂທລະສັບທີ່ເບີ **1-800-621-3362**.

**ຕິດຕໍ່ຫາຜູ້ໃຫ້ກູ້ຢືມເງິນກູ້ທີ່ຢູ່ອາໄສຂອງທ່ານ**
ບອກຜູ້ໃຫ້ກູ້ຢືມເງິນກູ້ທີ່ຢູ່ອາໄສຂອງທ່ານ ເຊິ່ງເປັນນິຕິບຸກຄົນທີ່ທ່ານຊຳລະເງິນກູ້ຊື້ເຮືອນລາຍເດືອນຂອງທ່ານ ເຊິ່ງຍັງເອີ້ນວ່າຜູ້ໃຫ້ບໍລິການ ໃຫ້ເຂົາເຈົ້າໄດ້ຮູ້ວ່າທ່ານໄດ້ຖືກຜົນກະທົບຈາກໄພພິບັດ. ເອົາໝາຍເລກໄພພິບັດຂອງ FEMA ໃຫ້ແກ່ເຂົາເຈົ້າ ແລະ ອັບເດດເບີໂທລະສັບ ແລະ ຂໍ້ມູນຕິດຕໍ່ອື່ນໆ ຂອງທ່ານ, ຖ້າຈຳເປັນ. ຍິ່ງທ່ານຕິດຕໍ່ຜູ້ໃຫ້ກູ້ຢືມຂອງທ່ານໄວເທົ່າໃດ; ພວກເຂົາກໍຈະສາມາດຊ່ວຍເຫຼືອທ່ານດ້ວຍທາງເລືອກຕ່າງໆ ທີ່ອາດຈະມີໃຫ້ແກ່ທ່ານໄດ້ໄວເທົ່ານັ້ນ. ຖາມວ່າທ່ານມີສິດໄດ້ຮັບການເລື່ອນການຊຳລະເງິນກູ້ທີ່ຢູ່ອາໄສຊົ່ວຄາວຫຼືບໍ່ ເພື່ອໃຫ້ທ່ານມີເວລາຈັດການສິ່ງຕ່າງໆ. ຜູ້ໃຫ້ກູ້ຢືມຫຼາຍລາຍຈະໂຈະການປັບໃໝການຊຳລະຊ້າ ແລະ ຈະບໍ່ລາຍງານການຊຳລະເງິນໜີ້ຊ້າຫາໜ່ວຍງານລາຍງານສິນເຊື່ອ ເພື່ອບໍ່ໃຫ້ສິນເຊື່ອຂອງທ່ານໄດ້ຮັບຜົນກະທົບໃນທາງລົບ. ເມື່ອການເລື່ອນການຊຳລະເງິນກູ້ສິ້ນສຸດແລ້ວ, ໃຫ້ຕິດຕໍ່ຫາຜູ້ໃຫ້ກູ້ຢືມຂອງທ່ານອີກຄັ້ງເພື່ອໂອ້ລົມກ່ຽວກັບວ່າທ່ານວາງແຜນຈະຊຳລະເງິນກູ້ທີ່ຢູ່ອາໄສຂອງທ່ານແນວໃດ. ເຖິງແມ່ນວ່າບໍ່ໄດ້ເກີດການເສຍຫາຍໃດໆ ຕໍ່ກັບເຮືອນຂອງທ່ານ, ຜູ້ໃຫ້ກູ້ຢືມຂອງທ່ານອາດຈະສາມາດຊ່ວຍທ່ານໄດ້ ຖ້າໄພພິບັດມີຜົນກະທົບຕໍ່ກັບຄວາມສາມາດຊຳລະເງິນກູ້ຊື້ເຮືອນຂອງທ່ານ (ຕົວຢ່າງ: ຖ້າທ່ານສູນເສຍວຽກເຮັດງານທຳ ຫຼື ຊົ່ວຄາວ ຫຼື ຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງເນື່ອງຈາກໄພພິບັດ).

**ຕິດຕໍ່ຫາອົງການໃຫ້ຄຳປຶກສາດ້ານທີ່ຢູ່ອາໄສທີ່ HUD ອະນຸມັດ**
ອົງການໃຫ້ຄຳປຶກສາດ້ານທີ່ຢູ່ອາໄສທີ່ໄດ້ຮັບອະນຸມັດຈາກ HUD ດຽວກັນທີ່ໃຫ້ຄຳປຶກສາ ແລະ ການສຶກສາອົບຮົມກ່ຽວກັບການຊື້ເຮືອນ ສາມາດໃຫ້ຄຳແນະນຳກ່ຽວກັບເງິນກູ້ທີ່ຢູ່ອາໄສຫຼັງຈາກໄພພິບັດໄດ້ເຊັ່ນກັນ. ຖ້າທ່ານບໍ່ແນ່ໃຈກ່ຽວກັບການຕັດສິນໃຈດ້ານການເງິນທີ່ກ່ຽວຂ້ອງກັບເງິນກູ້ທີ່ຢູ່ອາໄສຂອງທ່ານ, ໃຫ້ຕິດຕໍ່ຫາຜູ້ໃຫ້ຄຳປຶກສາດ້ານທີ່ຢູ່ອາໄສ.  ຜູ້ໃຫ້ຄຳປຶກສາດ້ານທີ່ຢູ່ອາໄສຍັງໃຫ້ຄຳແນະນຳເລື່ອງບັດເຄຣດິດ, ເງິນກູ້ນັກສຶກສາ ແລະ ໜີ້ສິນອື່ນໆ ແລະ ມີຂໍ້ມູນອື່ນໆທີ່ອາດຈະຊ່ວຍທ່ານໄດ້ໃນຊ່ວງໄລຍະຟື້ນຟູຂອງທ່ານ. **ທ່ານບໍ່ຈຳເປັນຕ້ອງມີເງິນກູ້ FHA ຈຶ່ງຈະໄດ້ພົບກັບອົງການໃຫ້ຄຳປຶກສາດ້ານທີ່ຢູ່ອາໄສທີ່ HUD ອະນຸມັດ ແລະ ບໍ່ມີຄ່າທຳນຽມສຳລັບການໃຫ້ຄຳປຶກສາກ່ຽວກັບການປ້ອງກັນການປິດຊັບທີ່ຈຳນອງໄວ້.** ເພື່ອຊອກຫາອົງການໃຫ້ຄຳປຶກສາດ້ານທີ່ຢູ່ອາໄສທີ່ຢູ່ໃກ້ທ່ານ, ໃຫ້ໂທຫາເບີຫາຜູ້ໃຫ້ຄຳປຶກສາດ້ານທີ່ຢູ່ອາໄສອັດຕະໂນມັດ (Automated Housing Counselor Locator) ຂອງ HUD ທີ່ເບີ **1-800-569-4287** ຫຼື ເຂົ້າຫາ **www.hud.gov/fha.**

**ສູນບໍລິການແຫ່ງຊາດຂອງ FHA**
ຖ້າທ່ານມີເງິນກູ້ທີ່ຢູ່ອາໄສທີ່ FHA ຮັບປະກັນ, ສູນບໍລິການແຫ່ງຊາດຂອງ FHA ທີ່ເບີ **1-877-622-8525 (Federal Relay Service ທີ່ເບີ 1-800-877-8339)** ສາມາດຊ່ວຍທ່ານໄດ້ ຖ້າທ່ານມີຄຳຖາມໃດໆ ກ່ຽວກັບເງິນກູ້ຂອງທ່ານທີ່ຜູ້ໃຫ້ກູ້ຢືມ FHA ບໍ່ສາມາດຕອບໄດ້ ຫຼື ຖ້າທ່ານມີຄຳຖາມ ຫຼື ບັນຫາກັງວົນໃຈກ່ຽວກັບຜູ້ໃຫ້ກູ້ຢືມ FHA ຂອງທ່ານ. ຖ້າທ່ານບໍ່ມີເງິນກູ້ຊື້ເຮືອນທີ່ FHA ຮັບປະກັນ, ໃຫ້ຕິດຕໍ່ຫາຜູ້ໃຫ້ກູ້ຢືມຂອງທ່ານໃນທັນທີ ຫຼື ຕິດຕໍ່ຫາຜູ້ໃຫ້ຄຳປຶກສາດ້ານທີ່ຢູ່ອາໄສ.

**ທີ່ຢູ່ອາໄສຊົ່ວຄາວ**
ຂໍ້ມູນກ່ຽວກັບທີ່ຢູ່ອາໄສຊົ່ວຄາວອາດຈະມີໃຫ້ຈາກຫຼາກຫຼາຍແຫຼ່ງຂໍ້ມູນ ລວມທັງສູນຟື້ນຟູໄພພິບັດຂອງ FEMA, ອົງການ ຫຼື ໜ່ວຍງານການເງິນເພື່ອທີ່ຢູ່ອາໄສປະຈຳລັດຂອງທ່ານ, ອົງການທີ່ຢູ່ອາໄສໃນຕົວເມືອງ ຫຼື ເຂດປົກຄອງຂອງທ່ານ,Red Cross (ອົງການກາແດງ), Salvation Army, ໂບດທ້ອງຖິ່ນ ແລະ ອົງການໂຕ້ຕອບໄພພິບັດອື່ນໆ.

**ລາຍງານສິນເຊື່ອ**
ທ່ານສາມາດຕິດຕໍ່ຫາສຳນັກງານລາຍງານສິນເຊື່ອແຫ່ງຊາດ, Experian, Equifax, ແລະ TransUnion ເພື່ອໃຫ້ບັນຈຸຂໍ້ຄວາມໃສ່ໃນລາຍງານສິນເຊື່ອຂອງທ່ານທີ່ຊີ້ບອກວ່າທ່ານແມ່ນຜູ້ເຄາະຮ້າຍຈາກໄພພິບັດ ຫຼື ຖ້າທ່ານກັງວົນໃຈກ່ຽວກັບກິດຈະກຳທີ່ບໍ່ເໝາະສົມ ຫຼື ບໍ່ຖືກຕ້ອງໃນບົດລາຍງານສິນເຊື່ອຂອງທ່ານ. ເພື່ອຂໍຄວາມຊ່ວຍເຫຼືອ, ໃຫ້ຕິດຕໍ່ຫາອົງການໃຫ້ຄຳປຶກສາດ້ານທີ່ຢູ່ອາໄສທີ່ HUD ອະນຸມັດ. ກົດໝາຍລັດຖະບານກາງອະນຸຍາດໃຫ້ທ່ານຂໍເອົາລາຍງານສິນເຊື່ອຟຣີໜຶ່ງຄັ້ງຕໍ່ປີຈາກແຕ່ລະໜ່ວຍງານໃນສາມໜ່ວຍງານເຫຼົ່ານີ້. ເພື່ອຂໍເອົາລາຍງານສິນເຊື່ອຟຣີຂອງທ່ານ, ໃຫ້ເຂົ້າຫາ www.annualcreditreport.com.

## ຂໍ້ມູນເພີ່ມເຕີມເລື່ອງການຊ່ວຍເຫຼືອຟື້ນຟູຈາກໄພພິບັດ

**ທາງເລືອກຂອງການຊ່ວຍເຫຼືອເລື່ອງເງິນກູ້ທີ່ຢູ່ອາໄສສຳລັບເຈົ້າຂອງເຮືອນ**
ປະເພດການຊ່ວຍເຫຼືອເລື່ອງເງິນກູ້ທີ່ຢູ່ອາໄສທີ່ທ່ານອາດຈະສາມາດໄດ້ຮັບ ຈະຂຶ້ນກັບກັບປະເພດເງິນກູ້ທີ່ທ່ານມີ, ສະພາບລາຍ

ຮັບ/ສະຖານະການຈ້າງງານຂອງທ່ານ, ສະພາບເຮືອນຂອງທ່ານ ແລະ ປັດໃຈອື່ນໆ. ກວດເບິ່ງນຳຜູ້ໃຫ້ກູ້ຢືມຂອງທ່ານເພື່ອກຳນົດວ່າທ່ານອາດຈະມີສິດໄດ້ຮັບທາງເລືອກໃດແດ່. ລຸ່ມນີ້ແມ່ນທາງເລືອກຈຳນວນໜຶ່ງສຳລັບຜູ້ທີ່ມີເງິນກູ້ທີ່ອົງການຄຸ້ມຄອງທີ່ຢູ່ອາໄສຂອງລັດຖະບານກາງ (FHA) ຮັບປະກັນ:

**ການຊຳລະຄືນສຳລັບແຜນການເລື່ອນຊຳລະໜີ້ຊົ່ວຄາວ:** ຂໍ້ຕົກລົງລະຫວ່າງທ່ານກັບຜູ້ໃຫ້ກູ້ຢືມຂອງທ່ານທີ່ໃຫ້ໂອກາດແກ່ທ່ານຈ່າຍແທນຄືນເງິນທີ່ພາດຈ່າຍໃນຕະຫຼອດໄລຍະເວລາໃດໜຶ່ງ, ນອກຈາກການຊຳລະເງິນກູ້ທີ່ຢູ່ອາໄສປົກກະຕິຂອງທ່ານ.

**ການແກ້ໄຂປ່ຽນແປງເງິນກູ້:** ການປ່ຽນແປງຖາວອນຂອງໜຶ່ງ ຫຼື ຫຼາຍເງື່ອນໄຂຂອງເງິນກູ້ຂອງທ່ານອີງຕາມຄວາມລຳບາກດ້ານການເງິນຂອງທ່ານ.

**ການອ້າງສິດບາງສ່ວນ:** ເງິນກູ້ທີ່ ບໍ່ມີດອກເບ້ຍສຳລັບຈຳນວນທີ່ກາຍກຳນົດຈ່າຍຂອງທ່ານທີ່ຕ້ອງຈ່າຍ ເມື່ອທ່ານຂາຍເຮືອນຂອງທ່ານ ຫຼື ຈ່າຍເງິນກູ້ທີ່ຢູ່ອາໄສຂອງທ່ານໝົດແລ້ວ.

**ການຂາຍໄລຍະສັ້ນ (ການຂາຍກ່ອນການຍຶດຊັບທີ່ຈຳນອງໄວ້):** ຂໍ້ຕົກລົງກັບຜູ້ໃຫ້ກູ້ຢືມຂອງທ່ານບ່ອນທີ່ທ່ານສາມາດຂາຍເຮືອນຂອງທ່ານເປັນຈຳນວນເງິນທີ່ໜ້ອຍກວ່າຈຳນວນທີ່ທ່ານຕິດໜີ້.

**ການໂອນໃຫ້ແທນການຖືກຍຶດຊັບ:** ຂໍ້ຕົກລົງກັບຜູ້ໃຫ້ກູ້ຢືມຂອງທ່ານບ່ອນທີ່ທ່ານເຊັນມອບກຳມະສິດຂອງເຮືອນຂອງທ່ານໃຫ້ແກ່ເຂົາເຈົ້າເພື່ອແລກປ່ຽນກັບການປົດປ່ອຍພັນທະຂອງທ່ານພາຍໃຕ້ເງິນກູ້ທີ່ຢູ່ອາໄສຂອງທ່ານ.

## ລະວັງການຫຼອກລວງ

ລະວັງການຫຼອກລວງເລື່ອງການຊ່ວຍເຫຼືອເງິນກູ້ທີ່ຢູ່ອາໄສ ຫຼື ການກູ້ໄພ ແລະ ກົນລະຍຸດການສໍ້ໂກງຫຼອກລວງອື່ນໆ. ຫຼີກລ່ຽງບຸກຄົນທີ່ບອກວ່າພວກເຂົາສາມາດຊ່ວຍທ່ານເລື່ອງເງິນກູ້ຂອງທ່ານ ຫຼື ໃຫ້ການສ້ອມແປງເຮືອນ ຫຼື ການບໍລິການອື່ນໆ ແກ່ທ່ານໄດ້ ແລະ ຮຽກຮ້ອງເອົາຄ່າທຳນຽມກ່ອນ. ລະວັງຜູ້ຮັບເໝົາທີ່ບໍ່ມີໃບອະນຸຍາດ. ຢ່າເຊັນອັນໃດກໍ່ຕາມທີ່ທ່ານບໍ່ເຂົ້າໃຈ. ຖາມຄຳຖາມ ແລະ ຂໍເອົາຄຳປຶກສາກ່ອນທີ່ຈະເຮັດການຕັດສິນໃຈຕ່າງໆ. ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ເຂົ້າເບິ່ງ **www.HUD.gov, www.FEMA.gov** ຫຼື **www.loanscamalert.org.**

## ການສ້າງໃໝ່, ການສ້ອມແປງ, ການຍ້າຍບ່ອນ

ກວດເບິ່ງນຳອົງການຄຸ້ມຄອງທຸລະກິດຂະໜາດນ້ອຍ [Small Business Administration] (**www.SBA.gov**) ສຳລັບການຊ່ວຍເຫຼືອເລື່ອງເງິນກູ້ສຳລັບ <u>ເຮືອນ ແລະ ທຸລະກິດ</u>. FHA ມີຫຼາຍໆໂຄງການໃຫ້ພິຈາລະນາ ຖ້າທ່ານຕັດສິນໃຈສ້າງໃໝ່, ສ້ອມແປງ ຫຼື ຍ້າຍບ່ອນ:

- **FHA 203(h):** ຖ້າທ່ານແມ່ນເຈົ້າຂອງເຮືອນ ຫຼື ຜູ້ເຊົ່າເຮືອນ ແລະ ເຮືອນຂອງທ່ານທີ່ຢູ່ໃນພື້ນທີ່ທີ່ຖືກຜົນກະທົບ ໄດ້ຖືກທຳລາຍ ຫຼື ໄດ້ຮັບຄວາມເສຍຫາຍໃນຂອບເຂດທີ່ຈຳເປັນຕ້ອງໄດ້ສ້າງໃໝ່ ຫຼື ປ່ຽນແທນໃໝ່, ທ່ານອາດຈະມີສິດໄດ້ຮັບເງິນກູ້ທີ່ຢູ່ອາໄສ**FHA 203(h)**. 203(h) ໃຫ້ທຶນຈາກ FHA ໂດຍບໍ່ມີເງິນຜ່ອນເພື່ອຊື້ເຮືອນໃໝ່ໃນເມືອງຂອງທ່ານ ຫຼື ບ່ອນໃດໆກໍ່ຕາມໃນສະຫະລັດ. ຜູ້ກູ້ຢືມຕ້ອງລົງທະບຽນນຳ FEMA ແລະ ຕອບສະໜອງໄດ້ຂໍ້ກຳນົດອື່ນໆ.
- **FHA 203(k):** ໂຄງການນີ້ອະນຸຍາດໃຫ້ຜູ້ຊື້ເຮືອນ ຫຼື ເຈົ້າຂອງເຮືອນທີ່ມີຄຸນສົມບັດຄົບຖ້ວນ ຊື້ເຮືອນ ຫຼື ຜ່ອນເງິນກູ້ທີ່ຢູ່ອາໄສທີ່ມີຢູ່ແລ້ວຄືນໃໝ່ ແລະ ລວມເອົາຄ່າໃຊ້ຈ່າຍຂອງການສ້ອມແປງ ຫຼື ການປັບປຸງເຮືອນເຂົ້າໃນຈຳນວນເງິນກູ້ນັ້ນ. ໃຊ້ເງິນກູ້ **FHA Standard 203(k) [FHA 203(k) ແບບມາດຕະຖານ]** ເມື່ອຈຳເປັນຕ້ອງເຮັດການສ້ອມແປງໃຫຍ່ ຫຼື ໂຄງສ້າງເຮືອນ ແລະ ໃຊ້ **FHA Limited 203(k) [FHA 203(k) ແບບຈຳກັດ]** ເມື່ອຈຳເປັນຕ້ອງເຮັດການສ້ອມແປງນ້ອຍທີ່ບໍ່ແມ່ນການສ້ອມແປງໂຄງສ້າງເຮືອນທີ່ມີມູນຄ່າທັງໝົດ $35,000 ຫຼື ນ້ອຍກວ່າ. FHA ຍັງໃຫ້ **Energy Efficient Mortgage [ເງິນກູ້ທີ່ຢູ່ອາໄສເພື່ອການປະຢັດພະລັງງານ]-** (EEM) ສຳລັບການສ້ອມແປງ ຫຼື ການປັບປຸງເພື່ອການປະຢັດພະລັງງານ. ເຂົ້າເບິ່ງ **www.hud.gov/fha** ຫຼື ໂທຫາ **1-800-Call FHA (800-225-5342**) ສຳລັບຂໍ້ມູນເພີ່ມເຕີມ. ຫຼື ໂທຫາຜູ້ໃຫ້ກູ້ຢືມທີ່ FHA ອະນຸມັດ.
- **FHA Title I Property Improvement Loan (ເງິນກູ້ເພື່ອປັບປຸງເຮືອນ FHA Title I)**: ນີ້ແມ່ນເງິນກູ້ທີ່ຢູ່ອາໄສສຳລັບການປັບປ່ຽນແກ້ໄຂເຮືອນ, ການສ້ອມແປງ ຫຼື ການປັບປຸງສະຖານທີ່. ຈຳນວນເງິນກູ້ສູງສຸດສຳລັບເຮືອນທີ່ມີຄອບຄົວດຽວແມ່ນ $25,000; $25,090 ສຳລັບເຮືອນສຳເລັດຮູບທີ່ມີຖານຖາວອນ; ແລະ $7,500 ສຳລັບເຮືອນສຳເລັດຮູບທີ່ຈັດປະເພດເປັນຊັບສິນສ່ວນບຸກຄົນ.

**ຕິດຕໍ່ຫາ FHA:** ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການຂອງ FHA, ໃຫ້ເຂົ້າເບິ່ງ **www.fha.gov, www.espanol.hud.gov.** ໂທຫາພວກເຮົາທີ່ເບີ **1-800-Call FHA (1-800-225-5342),** ອີເມວຫາພວກເຮົາທີ່ **answers@hud.gov** ຫຼື ເຂົ້າເບິ່ງຖານຄວາມຮູ້ທາງອອນລາຍຂອງພວກເຮົາທີ່ **www.hud.gov/answers.** ບຸກຄົນທີ່ມີຄວາມບົກພ່ອງດ້ານການເວົ້າ ຫຼື ການໄດ້ຍິນສາມາດເຂົ້າຫາເບີນີ້ຜ່ານລະບົບ TTY ໂດຍການໂທຫາ Federal Relay Service ທີ່ເບີ (800) 877-8339 ຫຼື ໂດຍການໃຊ້ຮູບແບບທີ່ເຂົ້າເຖິງໄດ້ຕ່າງໆ ທີ່ມີໃຫ້ຜ່ານເບີໂທຕ່າງໆ ທີ່ສະໜອງໃຫ້ຕາມລິ້ງຕໍ່ໄປນີ້: https://www.federalrelay.us/tty.

*ຕຸລາ 2016*

**ເງິນກູ້ ແລະ ກຳມະສິດບໍ່ສາມາດອ້າງອີງເປັນຊື່/ກຳມະສິດອື່ນໄດ້ ສະນັ້ນ ຈຶ່ງປະໄວ້ເປັນພາສາອັງກິດຕາມຕົ້ນສະບັບ.